# ບົດປະກອບຄຳເຫັນ
# ພະແນກ ປທສ ແຂວງບໍ່ແກ້ວ

**ໃນຫົວຂໍ້:** ການມີສ່ວນຮ່ວມໃນການແກ້ໄຂຄື້ນຄວາມຖີ່ ແລະ ການນຳເຂົ້າ-ຈຳໜ່າຍອຸປະກອນໄອຊີທີ ຢູ່ເຂດເສດຖະກິດພິເສດສາມຫຼ່ຽມຄຳ ແຂວງບໍ່ແກ້ວ.

**1. ການຄຸ້ມຄອງ ການນຳເຂົ້າ ແລະ ຈຳໜ່າຍອຸປະກອນ ໄອຊີທີ ແລະ ການນຳໃຊ້ຄື້ນຄວາມຖີ່ວິທະຍຸສື່ສານ(ໂຟນີ) ຢູ່ເຂດເສດຖະກິດພິເສດສາມຫຼ່ຽມຄຳ ແຂວງບໍ່ແກ້ວ.**

ໃນໄລຍະ 1 ປີຜ່ານມາ ພະແນກ ປທສ ພວກເຮົາແມ່ນໄດ້ເຮັດໜ້າທີ່ຊຸກຍູ້, ຕິດຕາມ,ກວດກາ ແລະ ມີສ່ວນຮ່ວມໃນການແກ້ໄຂວຽກງານໄອຊີທີ ຢູ່ເຂດເສດຖະກິດພິເສດສາມຫຼ່ຽມຄຳ ເຊິ່ງມີລາຍລະອຽດດັ່ງນີ້:

- ການຄຸ້ມຄອງ ການນຳເຂົ້າ ແລະ ຈຳໜ່າຍອຸປະກອນ ໄອຊີທີ ຢູ່ເຂດດັ່ງກ່າວ ຜ່ານມາພະແນກ ປທສ ແຂວງ ບໍ່ແກ້ວ ພວກເຮົາບໍ່ໄດ້ເຂົ້າໄປຄຸ້ມຄອງ ເພາະວ່າ ຄະນະບໍລິຫານເຂດເສດຖະກິດພິເສດສາມຫຼ່ຽມຄຳ ເປັນກົງຈັກການຈັດຕັ້ງໜຶ່ງ ທີ່ໄດ້ຮັບການແຕ່ງຕັ້ງຈາກລັດຖະບານ ເຊິ່ງປະກອບມີ: ຄະນະບໍລິຫານ ເຂດເສດຖະກິດພິເສດສາມຫຼ່ຽມຄຳ ທີ່ຂຶ້ນກັບຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ( ກອງເລຂາ ຄຸ້ມຄອງເຂດເສດຖະກິດພິເສດ ແລະ ເຂດເສດຖະກິດສະເພາະ ) ທີ່ເຮັດໜ້າທີ່ຕາງໜ້າລັດຖະບານ ແລະ ຄະນະສະພາບໍລິຫານເຂດ.

ດັ່ງນັ້ນ: ການອອກໃບອະນຸຍາດດຳເນີນທຸລະກິດໃຫ້ຜູ້ປະກອບການ ດ້ານໄອຊີທີ ແມ່ນທາງຄະນະສະພາບໍລິຫານເຂດດັ່ງກ່າວເປັນຜູ້ອະນຸຍາດ ໂດຍບໍ່ໄດ້ຈຳແນກປະເພດທຸລະກິດ. ປີ 2018 ພະແນກ ປທສ ໄດ້ເອົາໃຈໃສ່ຊຸກຍູ້ບັນດາບໍລິສັດ ໂທລະຄົມມະນາຄົມສາຂາແຂວງບໍ່ແກ້ວ ເຄື່ອນໄຫວດຳເນີນທຸລະກິດຮ່ວມກັບສະພາບໍລິຫານເຂດດັ່ງກ່າວ ຕາມສັນຍາຮ່ວມມືສອງຝ່າຍ ມາຮອດປະຈຸບັນມີ 4 ບໍລິສັດ ທີ່ໄດ້ເຂົ້າໄປເຮັດທີ່ບໍລິການດ້ານໂທລະຄົມມະນາຄົມຢູ່ເຂດດັ່ງກ່າວປະກອບມີ: ບໍລິສັດ ລາວໂທລະຄົມ, ບໍລິສັດ ສະຕາໂທລະຄົມ ແລະ ບໍລິສັດ ສະກາຍໂທລະຄົມ ແລະ ບໍລິສັດ ອີທີແອວຈຳກັດ ສາຂາແຂວງ ເຊິ່ງໄດ້ພັດທະນາ ແລະ ຂະຫຍາຍພື້ນຖານໂຄງລ່າງ, ສາມາດຕອບສະໜອງສັນຍານ 3G, 4G ແລະ 4,5G ແລະ ຄອບຄຸມໄດ້ພື້ນທີ່ຂອງເຂດດັ່ງກ່າວ ໃນປີ 2018 ນີ້ ຢູ່ເຂດດັ່ງກ່າວມີ 1 ບໍລິສັດ ທີ່ເຮັດການບໍລິການອິນເຕີເນັດ ປະເພດ 3 ( ISP3 ) ເຊິ່ງໄດ້ຮັບອະນຸຍາດຈາກ ພະແນກ ປທສ ແຂວງ ຄື: ບໍລິສັດ ລາວອິນເຕີເນຊັນແນວ ບໍລິການທ່ອງທ່ຽວ ຈຳກັດ ແລະ ໄດ້ອອກໃບອະນຸຍາດການນຳໃຊ້ຄື້ນຄວາມຖີ່ວິທະຍຸສື່ສານ (ໂຟນີ) ໃຫ້ເຂດດັ່ງກ່າວມີຈຳນວນ 45 ເຄື່ອງ ( ອີງຕາມການລາຍງານ ) ສ່ວນການຄຸ້ມຄອງອຸປະກອນຕິດຕໍ່ສື່ສານ ( ໂຟນີ ) ຈາກຜູ້ປະກອບການເດີນເຮືອຂອງ ສປ ຈີນ ຢູ່ບໍລິເວນ ແມ່ນ້ຳຂອງຕອນເໜືອ ທາງພະແນກ ປທສ ແຂວງພວກເຮົາກໍບໍ່ໄດ້ຄຸ້ມຄອງ ເຊິ່ງເປັນສາຍເຫດທີ່ເຮັດໃຫ້ຜູ້ປະກອບການເດີນເຮືອຂົນສົ່ງສິນຄ້າພາຍໃນ ( ລາວ ) ມີການສົມທຽບ ຕໍ່ກັບການອອກໃບອະນຸຍາດນຳໃຊ້ຄື້ນຕິດພັນກັບການຈັດເກັບຄ່າທຳນຽມ ແລະ ຄ່າບໍລິການ.

**2. ສະພາບການແກ້ໄຂບັນຫາ ຄື້ນຄວາມຖີ່.**

ເລີ່ມແຕ່ປີ 2013-2016 ເຂດເສດຖະກິດພິເສດສາມຫຼ່ຽມຄຳໄດ້ນຳເຂົ້າສັນຍານໂທລະສັບຂອງເຄືອຂ່າຍຕ່າງປະເທດ (ຈີນ) ເຂົ້າມານຳໃຊ້ ແລະ ໃຫ້ການບໍລິການຢູ່ເຂດດັ່ງກ່າວ ແຕ່ພາຍຫຼັງໄດ້ມີແຈ້ງການຂອງຫ້ອງວ່າການສຳນັກງານນາຍົກ ລັດຖະມົນຕີ, ກະຊວງແຜນການ ແລະ ການລົງທຶນ, ຫ້ອງການກະຊວງ ປທສ ໃຫ້ຢຸດຕິການນຳເຂົ້າ ແລະ ການນຳໃຊ້ເຄືອຂ່າຍຂອງຕ່າງປະເທດ. ພະແນກ ປທສ ແຂວງ ໄດ້ເປັນເຈົ້າການ ໃນການຂໍທິດຊີ້ນຳ ຈາກສາຍຕັ້ງ ແລະ ສາຍຂວາງ ແລະ ໄດ້ປະສານສົມທົບກັບຂະແໜງການທີ່ກ່ຽວຂ້ອງ, ຄະນະບໍລິຫານ ເຂດເສດຖະກິດພິເສດສາມຫຼ່ຽມຄຳ ແລະ ຄະນະສະພາບໍລິຫານເຂດ ( ຜູ້ລົງທຶນ ) ໄດ້ມີຄວາມເປັນເອກກະພາບໃນການຢຸດຕິການນຳເຂົ້າ ແລະ ນຳໃຊ້ສັນຍານຂອງຕ່າງປະເທດ ( ຈີນ ) ແຕ່ວັນທີ 28 ກຸມພາ 2017 ມາຮອດປະຈຸບັນ ແມ່ນໄດ້ຢຸດຕິການນຳໃຊ້ເຄືອຂ່າຍຂອງໂທລະຄົມຂອງຕ່າງປະເທດ ( ຈີນ ) ຢ່າງຂາດຕົວ.

ສ່ວນການຕິດຕາມ,ກວດກາ ຄື້ນຄວາມຖີ່ຂ້າມແດນ ທາງພະແນກ ປທສ ແຂວງ ໄດ້ຮ່ວມກັບ ກົມຄື້ນຄວາມຖີ່ ກະຊວງ ປທສ ແລະ ບໍລິສັດ Link Tek ( ລິງເທັກ ) ປະເທດ ສ ເກົາຫຼີ ເພື່ອສຳຫຼວດ ແລະ ເກັບກຳຂໍ້ມູນ ກ່ຽວກັບຄື້ນຄວາມຖີ່ລົບກວນຈາກປະເທດເພື່ອນບ້ານ ຢູ່ຈຸດ ດອນຊາວ ແລະ ຈຸດຄາຊີໂນ ( ເຂດເສດຖະກິດພິເສດສາມຫຼ່ຽມຄຳ ).

ສຳລັບການແກ້ໄຂ ຂໍ້ສະເໜີ ຂອງຜູ້ປະກອບການເດີນເຮືອຂົນ-ສົ່ງສິນຄ້າ ( ພາຍໃນ ) ກ່ຽວກັບການອອກອະນຸຍາດນຳໃຊ້ຄື້ນ ຂອງຜູ້ປະກອບການເດີນເຮືອຂອງຕ່າງປະເທດ ( ຈີນ ) ທາງພະແນກ ປທສ ແຂວງພວກເຮົາກໍໄດ້ປະສານສົມທົບກັບກົມຄື້ນ ເພື່ອຫາວິທີແກ້ໄຂ.